ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 3604/ກປ

ນະຄອນຫຼວງວຽງຈັນ, ວັນທີ 17 ກັນຍາ 2019

# ຂໍ້ຕົກລົງ
## ວ່າດ້ວຍ ການຂຶ້ນທະບຽນວິຊາການຢາປາບສັດຕູພືດ

- ອີງຕາມ ດຳລັດຂອງລັດຖະບານ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ເລກທີ 1646/ກປຝ, ລົງວັນທີ 30 ກໍລະກົດ 2019;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມນະໂຍບາຍ ແລະ ນິຕິກຳ ເລກທີ 481/ກນບ, ລົງວັນທີ 16 ສິງຫາ 2019

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ຂັ້ນຕອນ ກ່ຽວກັບ ການຂຶ້ນທະບຽນວິຊາການຢາປາບສັດຕູພືດ ໃນ ສປປ ລາວ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ຂອງຢາປາບສັດຕູພືດ ແນໃສ່ປົກປ້ອງສຸຂະພາບຂອງ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ຈາກຄວາມສ່ຽງທີ່ກ່ຽວຂ້ອງກັບການນຳໃຊ້ຢາປາບສັດຕູພືດທີ່ບໍ່ໄດ້ຂຶ້ນທະບຽນ ປະກອບສ່ວນເຂົ້າໃນການພັດທະນາ ຕາມທິດກະສິກຳສະອາດ, ສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ການຂຶ້ນທະບຽນວິຊາການຢາປາບສັດຕູພືດ ແມ່ນ ຂະບວນການຮັບຮອງດ້ານການຂຶ້ນທະບຽນວິຊາການຢາປາບສັດຕູພືດ ໂດຍຜ່ານການປະເມີນຂໍ້ມູນທາງດ້ານວິທະຍາສາດ ເພື່ອຢັ້ງຢືນວ່າ ຜະລິດຕະພັນທີ່ຈະຂຶ້ນທະບຽນ ນັ້ນ ມີປະສິດທິພາບຕໍ່ເປົ້າໝາຍ ແລະ ບໍ່ມີຄວາມສ່ຽງ ຕໍ່ສຸຂະພາບຂອງ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.

ການຂຶ້ນທະບຽນວິຊາການຢາປາບສັດຕູພືດ ມີ ສາມ ປະເພດ ດັ່ງນີ້:

1. ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ;
2. ການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ;
3. ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊໍ້າກັນ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ດໍາລັດ** ໝາຍເຖິງ ດໍາລັດຂອງລັດຖະບານ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ວັນທີ 24 ສິງຫາ 2017;
2. **ຢາປາບສັດຕູພືດຊີວະພາບ** ນອກຈາກທີ່ໄດ້ກໍານົດໄວ້ໃນ ມາດຕາ 3 ຂໍ້ທີ 17 ຂອງດໍາລັດແລ້ວ ຍັງໝາຍເຖິງ ຢາປາບສັດຕູພືດທາງຊີວະວິທະຍາ ຫຼື ວັດຖຸທີ່ໄດ້ມາຈາກທໍາມະຊາດ ຊຶ່ງສາມາດປະກອບ ແລະ ນໍາໃຊ້ ຄ້າຍຄືກັບຢາປາບສັດຕູພືດທາງເຄມີທົ່ວໄປ ເພື່ອນໍາໃຊ້ສໍາລັບການຄວບຄຸມສັດຕູພືດໃນໄລຍະສັ້ນ;
3. **ຜະລິດຕະພັນຢາປາບສັດຕູພືດ** ໝາຍເຖິງ ສານອອກລິດ ແລະ ສ່ວນປະກອບອື່ນ ທີ່ໄດ້ຜ່ານການປຸງແຕ່ງ ແລະ ບັນຈຸໃນພາຊະນະ ເພື່ອຈໍາໜ່າຍ;
4. **ຄວາມເປັນພິດກະທັນຫັນ** ໝາຍເຖິງ ການກະທົບຂອງວັດຖຸທີ່ເປັນພິດ ຊຶ່ງເກີດມາຈາກການໄດ້ຮັບພິດຄັ້ງດຽວ ຫຼື ຫຼາຍຄັ້ງ ໃນໄລຍະເວລາສັ້ນ ຫຼື ຕໍ່າກວ່າ ຊາວສີ່ ຊົ່ວໂມງ;
5. **ຄວາມອັນຕະລາຍ** ໝາຍເຖິງ ຄຸນລັກສະນະສະເພາະທີ່ເກີດຈາກສານເຄມີ ຫຼື ເຊື້ອຈຸລິນຊີ ຊຶ່ງອາດເຮັດໃຫ້ເກີດຜົນເສຍຫາຍ ຕໍ່ຊັບສິນ, ສຸຂະພາບຂອງ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
6. **ຄວາມເປັນພິດ** ໝາຍເຖິງ ລັກສະນະສະເພາະ ທາງວັດຖຸວິທະຍາ ແລະ ຊີວະວິທະຍາຂອງສານເຄມີ ທີ່ສາມາດສ້າງຄວາມອັນຕະລາຍ ຫຼື ຄວາມເສຍຫາຍ ຕໍ່ສິ່ງທີ່ມີຊີວິດ ຊຶ່ງບໍ່ໄດ້ລວມເອົາດ້ານກົນຈັກ;
7. **ຄວາມເປັນພິດຕໍ່ພືດ** ໝາຍເຖິງ ພິດ ຫຼື ຜົນກະທົບທີ່ເປັນອັນຕະລາຍຂອງສານເຄມີ ຕໍ່ ພືດ;
8. **ລະດັບການຕົກຄ້າງສູງສຸດ** ໝາຍເຖິງ ປະລິມານສານພິດຕົກຄ້າງສູງສຸດ ທີ່ຍອມຮັບໄດ້ຢ່າງເປັນທາງການ ໃນສິນຄ້າກະສິກໍາ, ອາຫານ ຫຼື ອາຫານສັດ;
9. **ຄວາມສ່ຽງ** ໝາຍເຖິງ ການເຄື່ອນໄຫວ ທີ່ອາດຈະສ້າງຜົນກະທົບທາງລົບ ຕໍ່ສຸຂະພາບຂອງຄົນ, ສັດ, ພືດ ຫຼື ສິ່ງແວດລ້ອມ ແລະ ສິ່ງຜົນໃຫ້ໄດ້ຮັບຄວາມອັນຕະລາຍຈາກຢາປາບສັດຕູພືດ;
10. **ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ** ໝາຍເຖິງ ຂະບວນການຮັບຮອງດ້ານວິຊາການ ສໍາລັບ ຜະລິດຕະພັນຢາປາບສັດຕູພືດ ທີ່ ຜະລິດຂຶ້ນ ຫຼື ນໍາເຂົ້າເປັນຄັ້ງທໍາອິດ ຫຼື ກໍາລັງຢູ່ໃນຂັ້ນຕອນທົດສອບປະສິດທິພາບ;
11. **ການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ** ໝາຍເຖິງ ຂະບວນການຮັບຮອງດ້ານວິຊາການ ສໍາລັບ ຜະລິດຕະພັນຢາປາບສັດຕູພືດ ທີ່ມີລາຍລະອຽດ ກ່ຽວກັບ ຜົນໄດ້ຮັບຂອງການທົດສອບປະສິດທິພາບ ຢູ່ພາຍໃນປະເທດ ແລະ ມີບົດປະເມີນຄວາມຖືກຕ້ອງທາງດ້ານວິຊາການ;

12. **ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊໍ້າກັນ** ໝາຍເຖິງ ຂະບວນການຮັບຮອງດ້ານວິຊາການ ສໍາລັບ ຜະລິດຕະພັນຢາປາບສັດຕູພືດຊະນິດດຽວກັນ ທີ່ໄດ້ຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ແລ້ວ, ຫຼັງຈາກນັ້ນ ໄດ້ອະນຸຍາດ ໃຫ້ຜູ້ຮ້ອງຂໍອື່ນ ໂດຍມີໃບມອບສິດຈາກເຈົ້າຂອງຜູ້ທີ່ໄດ້ຂຶ້ນທະບຽນເດີມ;
13. **ໜ່ວຍງານຂຶ້ນທະບຽນວິຊາການຢາປາບສັດຕູພືດ** ໝາຍເຖິງ ພະແນກລະບຽບການຂອງກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້;
14. **ຂັ້ນຕອນການແຈ້ງເຕືອນຂໍ້ມູນລ່ວງໜ້າ** ໝາຍເຖິງ ຂະບວນການຂອງສາກົນ ເພື່ອການແລກປ່ຽນ, ແຈ້ງ ຫຼື ຈັດການຂໍ້ມູນການແຈ້ງ ກ່ຽວກັບ ສານເຄມີທີ່ຫ້າມນໍາໃຊ້ ຫຼື ຈໍາກັດຢ່າງເຂັ້ມງວດ ແລະ ການປະສົມຢາປາບສັດຕູພືດທີ່ມີຄວາມອັນຕະລາຍຮ້າຍແຮງ ຕາມສົນທິສັນຍາຣົດເຕີດໍາ ກ່ຽວກັບ ຂັ້ນຕອນການແຈ້ງຂໍ້ມູນລ່ວງໜ້າ ສໍາລັບ ສານເຄມີ ແລະ ຢາປາບສັດຕູພືດອັນຕະລາຍ ຈໍານວນໜຶ່ງ ໃນການຄ້າສາກົນ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຂຶ້ນທະບຽນວິຊາການຢາປາບສັດຕູພືດ ໃນ ສປປ ລາວ.

## ໝວດທີ 2
## ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ

**ມາດຕາ 5 ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຜະລິດ ຫຼື ນໍາເຂົ້າ ຢາປາບສັດຕູພືດທີ່ບໍ່ເຄີຍຂຶ້ນທະບຽນ ໃນ ສປປ ລາວ ເພື່ອເປົ້າໝາຍນໍາໃຊ້ທີ່ກໍານົດໃຫ້ສະເພາະ ຕ້ອງສະເໜີ ຕໍ່ ກົມປູກຝັງ ເພື່ອຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ໂດຍປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງ ຕາມແບບພິມກໍານົດໄວ້ ໃນເອກະສານຊ້ອນທ້າຍ 1;
2. ສໍາເນົາ ໃບທະບຽນວິສາຫະກິດ;
3. ສໍາເນົາ ໃບອະນຸຍາດດໍາເນີນທຸລະກິດຢາປາບສັດຕູພືດ;
4. ຕົວຢ່າງສະຫຼາກຢາປາບສັດຕູພືດ ຫຼື ແຜ່ນພັບຕິດແນບກັບພາຊະນະບັນຈຸ;
5. ຕົວຢ່າງເອກະສານ ຫຼື ພາບຖ່າຍສະແດງລັກສະນະພາຊະນະບັນຈຸ;
6. ຊຸດເອກະສານເຕັກນິກ ແລະ ສະໜອງຕົວຢ່າງ ສໍາລັບ ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 6 ແລະ 7 ຂອງຂໍ້ຕົກລົງສະບັບນີ້;
7. ແຜນການທົດສອບນໍາໃຊ້ ກ່ຽວກັບ ຄຸນນະພາບ ແລະ ປະສິດທິພາບ ຂອງຢາປາບສັດຕູພືດ ຢູ່ຫ້ອງວິໄຈ ແລະ ພາກສະໜາມ ໃນພື້ນທີ່ເປົ້າໝາຍ ຕາມທີ່ກໍານົດໄວ້ໃນບົດແນະນໍາ ຂອງກົມປູກຝັງ;
8. ໃບມອບສິດ ພ້ອມທັງ ສໍາເນົາບັດປະຈໍາຕົວຂອງຜູ້ຍື່ນເອກະສານ.

ໃນກໍລະນີນໍາເຂົ້າ ຕ້ອງປະກອບເອກະສານເພີ່ມ ດັ່ງນີ້:

1. ໃບມອບສິດ ຈາກ ຜູ້ຜະລິດຢາປາບສັດຕູພືດ ຂອງປະເທດສົ່ງອອກ;
2. ສໍາເນົາ ໃບຂຶ້ນທະບຽນຢາປາບສັດຕູພືດ ຢູ່ປະເທດຕົ້ນກໍາເນີດ;
3. ສໍາເນົາ ໃບຢັ້ງຢືນຜົນການວິໄຈສ່ວນປະກອບຂອງຢາປາບສັດຕູພືດ ຈາກປະເທດຕົ້ນກໍາເນີດ.

**ມາດຕາ 6 ຊຸດເອກະສານເຕັກນິກ ປະກອບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ**

ຊຸດເອກະສານເຕັກນິກ ປະກອບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ມີດັ່ງນີ້:

- **ເອກະສານທີ 1:** ຂໍ້ມູນດ້ານວັດຖຸ-ເຄມີ ລວມທັງ ຂໍ້ມູນດ້ານຊີວະເຄມີ ໃນກໍລະນີ ເປັນຊີວະເຄມີ ຄວບຄຸມສັດຕູພືດ ແລະ ຂໍ້ມູນດ້ານເຊື້ອຈຸລິນຊີ ໃນກໍລະນີ ເປັນເຊື້ອຈຸລິນຊີຄວບຄຸມສັດຕູພືດ;
- **ເອກະສານທີ 2:** ຂໍ້ມູນພິດວິທະຍາ;
- **ເອກະສານທີ 3:** ຂໍ້ມູນປະສິດທິພາບ;
- **ເອກະສານທີ 4:** ຂໍ້ມູນສານພິດຕົກຄ້າງ;
- **ເອກະສານທີ 5:** ຂໍ້ມູນຄວາມສ່ຽງຕໍ່ສຸຂະພາບຂອງ ຄົນແລະ ຜົນກະທົບ ຕໍ່ ສິ່ງແວດລ້ອມ;
- **ເອກະສານທີ 6:** ການຕິດສະຫຼາກ, ການຫຸ້ມຫໍ່ ແລະ ການເກັບຮັກສາ;
- **ເອກະສານທີ 7:** ຂໍ້ມູນອື່ນທີ່ກ່ຽວຂ້ອງ ເຊັ່ນ: ການນຳໃຊ້, ການປ່ຽນແປງສູດປະສົມ, ການຫຸ້ມຫໍ່ຄືນ ແລະ ສູດສະເພາະ, ການກວດພົບລະດັບການຕົກຄ້າງ ເກີນກວ່າ ຂອບເຂດການຕົກຄ້າງສູງສຸດ ທີ່ກຳນົດ ໂດຍ ກົມປູກຝັງ ຫຼື ຫຼັກຖານຄວາມອັນຕະລາຍຂອງຢາປາບສັດຕູພືດທີ່ພົວພັນກັບການນຳໃຊ້ໃນພາກສະໜາມ.

ທຸກຂໍ້ມູນຄວາມຕ້ອງການ ສໍາລັບ ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ຕ້ອງປະກອບຕາມແບບພິມ ທີ່ ກົມປູກຝັງ ກຳນົດ ໂດຍມີລາຍເຊັນ ແລະ ປະທັບຕາ ຢ່າງເປັນທາງການ ຈາກຜູ້ຜະລິດ, ຜູ້ຮັບປະກັນ ຫຼື ອົງການ ທີ່ມີໜ້າທີ່ຄຸ້ມຄອງ ຂອງປະເທດສົ່ງອອກ ໃນກໍລະນີນຳເຂົ້າ.

**ມາດຕາ 7 ການສະໜອງຕົວຢ່າງ ສໍາລັບ ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ**

ກົມປູກຝັງ ເປັນຜູ້ອະນຸຍາດນຳເຂົ້າຕົວຢ່າງຜະລິດຕະພັນຢາປາບສັດຕູພືດ ທີ່ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ເພື່ອເປົ້າໝາຍເຮັດການທົດສອບໃນປະລິມານທີ່ເໝາະສົມ.

ຕົວຢ່າງທີ່ສົ່ງໃຫ້ທົດສອບ ຕ້ອງຢູ່ໃນພາຊະນະທີ່ເໝາະສົມ ແລະ ຕິດສະຫຼາກຂອງຜູ້ຜະລິດ ທີ່ບົ່ງບອກວ່າ "ສໍາລັບການທົດສອບນຳໃຊ້ເທົ່ານັ້ນ" ແລະ "ຫ້າມຈໍາໜ່າຍ" ພ້ອມທັງມີຂໍ້ມູນຕົ້ນຕໍ ດັ່ງນີ້:

1. ຊື່ການຄ້າ ຂອງຢາປາບສັດຕູພືດ;
2. ຊື່ສາມັນ ຂອງສານອອກລິດ;
3. ເຄື່ອງໝາຍອັນຕະລາຍ ຂອງອົງການອະນາໄມໂລກ;
4. ວັນ, ເດືອນ, ປີ ຜະລິດ ແລະ ໝົດອາຍຸການນຳໃຊ້;
5. ລາຍລະອຽດ ຂອງ ຄວາມເຂັ້ມຂຸ້ນ ແລະ ປະເພດສູດປະສົມ;
6. ຂະໜາດການບັນຈຸ;
7. ຂໍ້ມູນຄວາມປອດໄພ;
8. ຊື່ ແລະ ທີ່ຢູ່ ຂອງຜູ້ຂໍຂຶ້ນທະບຽນ.

**ມາດຕາ 8 ການກວດກາຄໍາຮ້ອງ ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ**

ພາຍຫຼັງໄດ້ຮັບຄໍາຮ້ອງ ຊຸດເອກະສານເຕັກນິກ ແລະ ຕົວຢ່າງຜະລິດຕະພັນຢາປາບສັດຕູພືດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5, 6 ແລະ 7 ຂອງ ຂໍ້ຕົກລົງສະບັບນີ້ ແລ້ວ, ກົມປູກຝັງ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຊຸດເອກະສານເຕັກນິກ ພ້ອມທັງຈ້າກາຂາເຂົ້າ ຂອງ ກົມປູກຝັງ ເພື່ອດໍາເນີນການຄົ້ນຄ້ວາຄໍາຮ້ອງ ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດ ຕາມທີ່ໄດ້ກຳນົດໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີ ພົບວ່າຊຸດເອກະສານທີ່ຂໍຂຶ້ນທະບຽນ ບໍ່ຄົບຖ້ວນ ຕ້ອງແນະນໍາໃຫ້ຜູ້ຮ້ອງຂໍຊາບທັນທີ ເພື່ອປະກອບຂໍ້ມູນ ຫຼື ເອກະສານ ເພີ່ມຕື່ມ.

**ມາດຕາ 9 ການຄົ້ນຄ້ວາຄໍາຮ້ອງ ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊື່ວຄາວ**

ພາຍຫຼັງເຫັນວ່າຊຸດຄໍາຮ້ອງ ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ມີຄວາມຖືກຕ້ອງ ແລະ ຄົບຖ້ວນ ແລ້ວ, ກົມປູກຝັງ ຕ້ອງຄົ້ນຄ້ວາພິຈາລະນາ ບັນດາຂໍ້ມູນທີ່ກ່ຽວຂ້ອງ ພາຍໃນ ຫ້າ ວັນລັດຖະການ ດັ່ງນີ້:

1. ບົດແນະນໍາ ການນໍາໃຊ້ຜະລິດຕະພັນຢາປາບສັດຕູພືດ ທີ່ສະເໜີຂໍຂຶ້ນທະບຽນ ຕ້ອງມີຂໍ້ມູນຄາດຄະເນຜົນກະທົບທີ່ຕາມມາ ຂອງການໄດ້ຮັບຢາປາບສັດຕູພືດ, ຜົນກະທົບທາງສະພາບອາກາດ ແລະ ພູມີສາດ ຂອງ ສປປ ລາວ;
2. ຂໍ້ມູນ ແລະ ຜົນການປະເມີນ ຂອງ ອົງການອາຫານ ແລະ ການກະເສດ, ອົງການອະນາໄມໂລກ ຫຼື ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ, ອົງການຂຶ້ນທະບຽນຂອງປະເທດທີ່ຜະລິດ, ອົງການຂຶ້ນທະບຽນຂອງປະເທດອ້າງອີງ ທີ່ ສປປ ລາວ ມີການຮ່ວມມື ຫຼື ແລກປ່ຽນຂໍ້ມູນຂ່າວສານນໍາກັນ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ຫຼື ອົງການຂຶ້ນທະບຽນຂອງປະເທດອື່ນ ທີ່ ສປປ ລາວ ຮັບຮູ້ລະບົບການຂຶ້ນທະບຽນ.
3. ຂໍ້ມູນທີ່ໄດ້ຈາກ:
   - ການສຶກສາທີ່ມີແລ້ວຈາກສິ່ງພິມ ລວມທັງ ຂໍ້ມູນໃໝ່ທີ່ໄດ້ຢັ້ງຢືນຈາກຫ້ອງທົດລອງ ທີ່ໄດ້ຮັບການຮັບຮອງ ໂດຍ ກະຊວງກະສິກໍາ ແລະ ປ່າໄມ້ ເພື່ອສະໜັບສະໜູນຂໍ້ມູນທີ່ມີແລ້ວ;
   - ຫ້ອງທົດລອງທີ່ໄດ້ມາດຕະຖານ ເປັນທີ່ຮັບຮູ້ຈາກສາກົນ;
   - ການທົດສອບ ພາຍໃຕ້ສະພາບຂອງພູມອາກາດດ້ານກະສິກໍາ ໃນປະເທດອື່ນ ຫຼື ພາກພື້ນທີ່ຄ້າຍຄືກັນ, ການທົດສອບ ຕາມວິທີການ ແລະ ມາດຕະຖານວິທະຍາສາດ ທີ່ຮັບຮອງຈາກສາກົນ ແລະ ການປະຕິບັດທີ່ດີ ຂອງຫ້ອງທົດລອງ ດ້ານຄວາມປອດໄພ ແລະ ສຸຂະພາບ.
4. ຂໍ້ມູນ ກ່ຽວກັບ ການຈັດລະດັບທາງດ້ານວິຊາການ ຂອງສານອອກລິດ ແລະ ຜະລິດຕະພັນຢາປາບສັດຕູພືດ ທີ່ໄດ້ສະເໜີໂດຍຜູ້ຮ້ອງຂໍ ຊຶ່ງກ່ຽວຂ້ອງກັບການຈັດລະດັບຢາປາບສັດຕູພືດທີ່ມີຢູ່ ຂອງ ອົງການອາຫານ ແລະ ການກະເສດ ແລະ ອົງການອະນາໄມໂລກ. ໃນກໍລະນີບໍ່ມີການຈັດລະດັບຂອງ ອົງການອາຫານ ແລະ ການກະເສດ ແລະ ອົງການອະນາໄມໂລກ, ກົມປູກຝັງ ສາມາດຄົ້ນຄວ້າຈັດລະດັບດ້ວຍຕົນເອງ ບົນພື້ນຖານ ມາດຕະຖານ ຫຼື ຄໍາແນະນໍາຂອງສາກົນ;
5. ຂໍ້ມູນ ກ່ຽວກັບ ການຕົກຄ້າງຍາວນານ ຫຼື ເປັນພິດຫຼາຍ ໃນເວລາເຜົາຜານພະລັງງານ ແລະ ລະດັບການຕົກຄ້າງ ໃນປະເທດອື່ນ;
6. ຂໍ້ມູນ ກ່ຽວກັບ ຄວາມເໝາະສົມດ້ານປະສິດທິພາບ ແລະ ຄວາມເປັນພິດ ຂອງຜະລິດຕະພັນຢາປາບສັດຕູພືດ;
7. ຂໍ້ມູນ ກ່ຽວກັບ ການຈັດການພາຊະນະບັນຈຸ ທີ່ໄດ້ສະເໜີ ແລະ ທາງເລືອກ ຂອງການກໍາຈັດສິ່ງເສດເຫຼືອ ຂອງຢາປາບສັດຕູພືດ ໃນ ສປປ ລາວ;
8. ຄວາມເປັນໄປໄດ້ທາງວິທະຍາສາດ ແລະ ວິຊາການ ທີ່ກ່ຽວຂ້ອງກັບການທົດສອບ;
9. ຂໍ້ມູນ ກ່ຽວກັບ ຄຸນນະພາບ ຂອງຢາປາບສັດຕູພືດ ແມ່ນມີຄວາມເໝາະສົມ;
10. ຂໍ້ມູນເພີ່ມເຕີມ ທີ່ຕ້ອງການ ແລະ ຜູ້ຮ້ອງຂໍ ບໍ່ສາມາດສະໜອງໃຫ້;
11. ຂໍ້ມູນ ກ່ຽວກັບ ຄວາມອັນຕະລາຍ ຂອງຢາປາບສັດຕູພືດ ຕໍ່ ສຸຂະພາບຂອງ ຄົນ, ສັດ ແລະ ສິ່ງແວດລ້ອມ ເພື່ອອະນຸຍາດໃຫ້ນໍາໃຊ້;

12. ຂໍ້ມູນ ກ່ຽວກັບ ຜະລິດຕະພັນອື່ນ ທີ່ມີປະສິດທິພາບ ເທົ່າທຽມກັນ ຫຼື ຫຼາຍກວ່າ, ແຕ່ວ່າ ມີຄວາມອັນຕະລາຍໜ້ອຍກວ່າ;
13. ຢາປາບສັດຕູພືດນັ້ນ ໄດ້ຖືກຫ້າມ ຫຼື ຈຳກັດນຳໃຊ້ ໂດຍ ສົນທິສັນຍາສາກົນ ຫຼື ປະເທດອື່ນ ທີ່ມີແບບແຜນການຂຶ້ນທະບຽນ ທີ່ຮັບຮູ້ໂດຍ ສປປ ລາວ;
14. ຂໍ້ມູນ ກ່ຽວກັບ ຄວາມສ່ຽງ ຫຼາຍກວ່າຜົນປະໂຫຍດ ຕາມເງື່ອນໄຂສະເພາະ ຂອງແຕ່ລະທ້ອງຖິ່ນ.

**ມາດຕາ 10 ການປະເມີນຄຳຮ້ອງ ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ**

ພາຍຫຼັງໄດ້ຄົ້ນຄວ້າຊຸດເອກະສານ ຂໍອະນຸຍາດຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ແລ້ວ ກົມປູກຝັງ ຕ້ອງດຳເນີນການປະເມີນຂໍ້ມູນຕ່າງໆຢ່າງຮອບດ້ານ ພາຍໃນ ເຈັດ ວັນລັດຖະການ ບົນພື້ນຖານເງື່ອນໄຂ ແລະ ຂໍ້ແນະນຳທີ່ເຊື່ອມໂຍງກັບ ມາດຕະຖານຂອງພາກພື້ນ ແລະ ສາກົນ ດັ່ງນີ້:

1. ຄວາມສອດຄ່ອງຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ລວມທັງ ກົດໝາຍທີ່ກ່ຽວຂ້ອງກັບຢາປາບສັດຕູພືດ;
2. ກວດກາຄືນ ຕາມບັນຊີຢາປາບສັດຕູພືດ ທີ່ຫ້າມນຳໃຊ້ ໃນ ສປປ ລາວ;
3. ປະເມີນຢາປາບສັດຕູພືດ ບົນພື້ນຖານຂອງເອກະສານທີ່ໄດ້ຮັບ;
4. ເຮັດການທົດລອງໃນພາກສະໜາມ;
5. ປະເມີນຄວາມສ່ຽງ ທີ່ກ່ຽວຂ້ອງກັບຄວາມອັນຕະລາຍຕໍ່ສຸຂະພາບຂອງຄົນ ແລະ ສິ່ງແວດລ້ອມ;
6. ວິໄຈ ແລະ ບັນທຶກ ຊ່ອງຫວ່າງຂອງຂໍ້ມູນ. ໃນກໍລະນີ ຕ້ອງການຂໍ້ມູນເພີ່ມ ໃຫ້ຂຽນເປັນລາຍລັກອັກສອນ ເຖິງຜູ້ຮ້ອງຂໍຂຶ້ນທະບຽນ.

**ມາດຕາ 11 ການອະນຸຍາດຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ**

ພາຍຫຼັງຄົ້ນຄວ້າ ແລະ ປະເມີນການສະເໜີ ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ກົມປູກຝັງ ຕ້ອງອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວພາຍໃນ ສາມ ວັນລັດຖະການ ຕາມແບບພິມທີ່ກຳນົດໄວ້ ໃນເອກະສານຊ້ອນທ້າຍ 2 ພ້ອມທັງດຳເນີນການ ດັ່ງນີ້:

1. ກຳນົດເລກທີສະເພາະ ສຳລັບ ຜະລິດຕະພັນຢາປາບສັດຕູພືດທີ່ໄດ້ຮັບອະນຸຍາດຂຶ້ນທະບຽນ;
2. ເພີ່ມລາຍລະອຽດ ຂອງການຂຶ້ນທະບຽນໃນບັນຊີຢາປາບສັດຕູພືດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງດຳລັດ ແລະ ເຜີຍແຜ່ໃຫ້ພາກສ່ວນທີ່ກ່ຽວຂ້ອງຊາບ;
3. ປັບປຸງບັນຊີການຂຶ້ນທະບຽນວິຊາການຢາປາບສັດຕູພືດຕາມຄວາມເໝາະສົມ.

ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ເລກທີສະເພາະ ແລະ ລະຫັດຫຍໍ້ "PP/ກປຝ" ໃນກໍລະນີ ຕໍ່ທະບຽນ ແມ່ນເລກທີເກົ່າຂອງການຂຶ້ນທະບຽນ;
2. ຊື່ສາມັນ ແລະ ຊື່ການຄ້າ;
3. ອັດຕາສ່ວນຮ້ອຍຂອງສານອອກລິດ;
4. ປະເພດສູດປະສົມ;
5. ລະດັບ ຄວາມເປັນອັນຕະລາຍ;
6. ເປົ້າໝາຍການນຳໃຊ້, ພືດ ແລະ ສັດຕູພືດເປົ້າໝາຍ;
7. ປະເພດຂອງພາຊະນະ ແລະ ຂະໜາດການບັນຈຸ;
8. ຊື່ ແລະ ທີ່ຢູ່ຂອງ ຜູ້ຜະລິດ, ຜູ້ສົ່ງອອກ, ຜູ້ນຳເຂົ້າ ແລະ ຈຳໜ່າຍ;
9. ເງື່ອນໄຂການນຳໃຊ້ ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ;
10. ອາຍຸໃບທະບຽນ.

**ມາດຕາ 12 ການຕໍ່ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ**

ໃບທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ສາມາດຕໍ່ໄດ້ ໃນກໍລະນີ ການທົດລອງໃນພາກສະໜາມ ຍັງບໍ່ສຳເລັດ ຫຼື ຂໍ້ມູນອື່ນທີ່ຕ້ອງການຍັງບໍ່ທັນມີ ເພື່ອເປັນບ່ອນອີງໃຫ້ແກ່ ກົມປູກຝັງ ແລະ ຄະນະກຳມະການພິຈາລະນາການຂຶ້ນທະບຽນວິຊາການຢາປາບສັດຕູພືດ ໄດ້ສືບຕໍ່ຕິດຕາມ ກ່ອນການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ.

## ໝວດທີ 3
## ການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ

**ມາດຕາ 13 ການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ**

ພາຍຫຼັງໄດ້ຮັບຜົນການທົດສອບປະສິດທິພາບ ຂອງນຳໃຊ້ຢາປາບສັດຕູພືດ ຢູ່ພາກສະໜາມ ແລະ ຜົນການວິໄຈສ່ວນປະກອບຂອງຢາປາບສັດຕູພືດ ຈາກຫ້ອງທົດລອງ ແລ້ວ, ຜູ້ທີ່ມີຈຸດປະສົງ ຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ຕ້ອງສະເໜີ ເຖິງ ກົມປູກຝັງ ແຕ່ງຕັ້ງພະນັກງານ ລົງປະເມີນສະຖານທີ່ດຳເນີນທຸລະກິດ ແລະ ສະຖານທີ່ເຮັດການທົບສອບຢາປາບສັດຕູພືດ ເພື່ອເປັນບ່ອນອີງ ໃນການພິຈາລະນາ, ທົບທວນຄືນ ແລະ ຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ.

ເອກະສານ ປະກອບຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ມີດັ່ງນີ້:

1. ຄຳຮ້ອງ ຕາມແບບພິມກຳນົດໄວ້ໃນເອກະສານຊ້ອນທ້າຍ 1;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສຳເນົາ ໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;
4. ໃບຢັ້ງຢືນຜົນການວິໄຈ ຂອງຢາປາບສັດຕູພືດ ຈາກຫ້ອງທົດລອງ ແລະ ບົດລາຍງານ ຜົນການລົງປະເມີນສະຖານທີ່ດຳເນີນທຸລະກິດ ແລະ ສະຖານທີ່ເຮັດການທົດສອບ;
5. ໃບຢັ້ງຢືນຜົນການທົດສອບຢູ່ພາກສະໜາມ;
6. ສຳເນົາ ຊຸດເອກະສານເຕັກນິກ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;
7. ໃບຮັບຮອງສະຫຼາກຢາປາບສັດຕູພືດ ຈາກກົມປູກຝັງ;
8. ໃບມອບສິດ ຜູ້ຜະລິດຢາປາບສັດຕູພືດ ຂອງປະເທດສົ່ງອອກ ແລະ ສຳເນົາບັດປະຈຳຕົວ ຫຼື ໜັງສືເດີນທາງ ກໍລະນີເປັນຄົນຕ່າງປະເທດ;
9. ໃບມອບສິດ ພ້ອມທັງ ສຳເນົາບັດປະຈຳຕົວຂອງຜູ້ຍື່ນເອກະ.

**ມາດຕາ 14 ການກວດກາ ຄຳຮ້ອງຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ**

ເມື່ອໄດ້ຮັບເອກະສານ ປະກອບຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ ແລ້ວ, ກົມປູກຝັງ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຊຸດເອກະສານດັ່ງກ່າວ ພ້ອມທັງຈ້ຳກາຊາເຂົ້າຂອງ ກົມປູກຝັງ. ໃນກໍລະນີພົບວ່າ ຊຸດເອກະສານທີ່ຂໍຂຶ້ນທະບຽນບໍ່ຄົບຖ້ວນ ຕ້ອງແນະນຳໃຫ້ຜູ້ຮ້ອງຂໍຊາບທັນທີ ເພື່ອປະກອບຂໍ້ມູນ ຫຼື ເອກະສານ ເພີ່ມຕື່ມ.

ກົມປູກຝັງ ຕ້ອງຄົ້ນຄ້ວາ ຄຳຮ້ອງຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ພາຍໃນ ສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ ພ້ອມທັງ ສະຫຼຸບຂໍ້ມູນ ແລະ ປະເມີນຜົນ ທີ່ໄດ້ດຳເນີນຕາມຮູບແບບພື້ນຖານ ຂອງການພິຈາລະນາທາງວິຊາການ ທີ່ກ່ຽວຂ້ອງກັບການຂຶ້ນທະບຽນ ເພື່ອສະເໜີ ຕໍ່ ຄະນະກຳມະການພິຈາລະນາການຂຶ້ນທະບຽນວິຊາການຢາປາບສັດຕູພືດ.

**ມາດຕາ 15 ການພິຈາລະນາອະນຸຍາດສະຫຼາກ ແລະ ແຜ່ນພັບ ສຳລັບ ການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ**

ກົມປູກຝັງ ເປັນຜູ້ພິຈາລະນາ ແລະ ຮັບຮອງ ສະຫຼາກ ແລະ ແຜ່ນພັບ ສຳລັບ ການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ບົນພື້ນຖານ ດັ່ງນີ້:

1. ການວາງຂໍ້ມູນເທິງສະຫຼາກ;
2. ສະຫຼາກ ສຳລັບ ພາຊະນະບັນຈຸທີ່ນ້ອຍ ຫຼື ແຜ່ນພັບເສີມ;
3. ຮູບແບບ ແລະ ຂໍ້ຄວາມຂອງເນື້ອໃນ;
4. ຂະໜາດການພິມ ແລະ ຮູບແບບ;
5. ການນຳໃຊ້ພື້ນທີ່ຢ່າງມີປະສິດທິພາບ;
6. ການນຳໃຊ້ແຖບສີເຕືອນໄພ;
7. ຄວາມທົນທານຂອງສະຫຼາກ ແລະ ວັດຖຸທີ່ເລືອກ, ນ້ຳມຶກ ແລະ ກາວຕິດ;
8. ລັກສະນະສະເພາະ ຂອງຜະລິດຕະພັນ;
9. ການນຳໃຊ້ທີ່ໄດ້ຮັບອະນຸຍາດ, ຂໍ້ແນະນຳ ແລະ ຂໍ້ຄວນລະວັງການນຳໃຊ້ ຊຶ່ງລວມທັງ ອັດຕານຳໃຊ້, ວິທີການ, ເວລາ ແລະ ສະຖານທີ່ນຳໃຊ້;
10. ເຄື່ອງນຸ່ງ ແລະ ວັດຖຸປະກອບປ້ອງກັນຮ່າງກາຍ;
11. ລະດັບຄວາມອັນຕະລາຍ, ຂໍ້ຄວາມເຕືອນໄພ ແລະ ຂໍ້ຄວນລະວັງອື່ນ.

**ມາດຕາ 16 ການທົບທວນຄືນການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ**

ພາຍຫຼັງໄດ້ຮັບການປະເມີນຄົບຖ້ວນແລ້ວ ກົມປູກຝັງ ຕ້ອງພິຈາລະນາພາຍໃນ ສາມສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ຈາກໜ່ວຍງານຂຶ້ນທະບຽນວິຊາການຢາປາບສັດຕູພືດ ໂດຍໃຫ້ປະຕິບັດ ດັ່ງນີ້:

1. ເປີດກອງປະຊຸມ ຄະນະກຳມະການພິຈາລະນາການຂຶ້ນທະບຽນວິຊາການຢາປາບສັດຕູພືດ;
2. ຍື່ນຄຳຮ້ອງ ແລະ ຊຸດເອກະສານຂໍຂຶ້ນທະບຽນ ເພື່ອການຄົ້ນຄ້ວາຂອງ ຄະນະກຳມະການພິຈາລະນາການຂຶ້ນທະບຽນວິຊາການຢາປາບສັດຕູພືດ;
3. ສະເໜີການປະກອບຄຳເຫັນ ຂອງ ກົມປູກຝັງ ບົນພື້ນຖານການຢັ້ງຢືນທາງດ້ານວິທະຍາສາດ ຊຶ່ງຂຶ້ນກັບການອະນຸຍາດ ຫຼື ການສົ່ງກັບຄືນ ຂອງການຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ.

ພາຍໃນ ສິບຫ້າ ວັນລັດຖະການ ຂອງການໄດ້ຮັບຄຳຮ້ອງ ແລະ ຊຸດເອກະສານຂໍຂຶ້ນທະບຽນ ແລ້ວ, ກົມປູກຝັງ ຕ້ອງສະເໜີ ຄະນະກຳມະການພິຈາລະນາການຂຶ້ນທະບຽນວິຊາການຢາປາບສັດຕູພືດ ເພື່ອເປີດກອງປະຊຸມ ພິຈາລະນາ, ຮັບຮອງ ຫຼື ປະຕິເສດ ພ້ອມທັງ ແຈ້ງຜູ້ສະເໜີໄດ້ຮັບຊາບ ບົນພື້ນຖານການພິຈາລະນາ ບັນດາຂໍ້ຈຳກັດ ຫຼື ເງື່ອນໄຂ ກ່ຽວກັບ ການອະນຸຍາດ ຕາມການສະເໜີ ຂອງ ກົມປູກຝັງ ແລະ ເງື່ອນໄຂຄວາມຕ້ອງການຂອງຂໍ້ມູນ ທີ່ໄດ້ກຳນົດໄວ້ ໃນມາດຕາ 14 ແລະ 15 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 17 ການອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ**

ກົມປູກຝັງ ຕ້ອງນຳໃຊ້ເລກທີດຽວກັນກັບ ເລກທີຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ແລະ ເອົາລາຍລະອຽດຂອງການຂຶ້ນທະບຽນ ໃສ່ໃນບັນຊີຢາປາບສັດຕູພືດ ຕາມທີ່ກຳນົດໄວ້ ໃນມາດຕາ 14 ຂອງດຳລັດ ເພື່ອປ່ຽນແທນໃບທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ແລະ ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຊາບ.

ໃບທະບຽນວິຊາການຢາປາບສັດຕູພືດຖາວອນ ຕ້ອງເຊັນ ແລະ ປະທັບຕາຂອງ ກົມປູກຝັງ ໂດຍມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ເລກທີສະເພາະ ແລະ ລະຫັດຫຍໍ້ "FP/ກປຝ". ໃນກໍລະນີ ຕໍ່ທະບຽນ ແມ່ນເລກທີເກົ່າຂອງການຂຶ້ນທະບຽນ;
2. ຊື່ສາມັນ ແລະ ຊື່ການຄ້າ;
3. ອັດຕາສ່ວນຮ້ອຍຂອງສານອອກລິດ;
4. ປະເພດສູດປະສົມ;
5. ລະດັບຄວາມເປັນອັນຕະລາຍ;
6. ເປົ້າໝາຍການນຳໃຊ້, ພືດ ແລະ ສັດຕູພືດເປົ້າໝາຍ;
7. ປະເພດຂອງພາຊະນະ ແລະ ຂະໜາດການບັນຈຸ;
8. ຊື່ ແລະ ທີ່ຢູ່ຂອງບໍລິສັດ ຜູ້ຜະລິດ, ຜູ້ສົ່ງອອກ, ຜູ້ນຳເຂົ້າ ແລະ ຈຳໜ່າຍ;
9. ເງື່ອນໄຂການນຳໃຊ້ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ;
10. ອາຍຸໃບທະບຽນ.

## ໝວດທີ 4
## ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊໍ້າກັນ

**ມາດຕາ 18 ການຂຶ້ນທະບຽນວິຊາການຢາປາບສັດຕູພືດຊໍ້າກັນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນຜະລິດຕະພັນຢາປາບສັດຕູພືດທີ່ຄ້າຍຄືກັນ ຫຼື ອັນດຽວກັນກັບຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນວິຊາການຖາວອນມາກ່ອນແລ້ວ ສາມາດຍື່ນຄຳຮ້ອງ ຕໍ່ ກົມປູກຝັງ ເພື່ອຂຶ້ນທະບຽນຊໍ້າກັນໄດ້ ບົນພື້ນຖານການເຫັນດີຂອງຜູ້ຂຶ້ນທະບຽນເດີມ.

ເອກະສານ ປະກອບຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊໍ້າກັນ ມີດັ່ງນີ້:

1. ໃບຄຳຮ້ອງ ຕາມແບບພິມກຳນົດໄວ້ ໃນເອກະສານຊ້ອນທ້າຍ 1;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສຳເນົາ ໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;
4. ຂໍ້ຕົກລົງ ຫຼື ສັນຍາ ລະຫວ່າງ ບໍລິສັດທຳອິດ ແລະ ບໍລິສັດທີ່ຕ້ອງການຂຶ້ນທະບຽນຊໍ້າກັນ ສຳລັບ ຜະລິດຕະພັນຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນວິຊາການຖາວອນມາແລ້ວ ເພື່ອນຳໃຊ້ຂໍ້ມູນທັງໝົດທີ່ກ່ຽວຂ້ອງກັບຜະລິດຕະພັນຢາປາບສັດຕູພືດນັ້ນ;
5. ໃບມອບສິດ ຈາກ ບໍລິສັດຂຶ້ນທະບຽນທຳອິດ;
6. ໃບຮັບຮອງສະຫຼາກຢາປາບສັດຕູພືດ ຈາກກົມປູກຝັງ;
7. ສຳເນົາ ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ຂອງຜູ້ຂຶ້ນທະບຽນເດີມ.

**ມາດຕາ 19 ການປະເມີນ ແລະ ການອອກໃບທະບຽນວິຊາການຢາປາບສັດຕູພືດຊໍ້າກັນ**

ພາຍຫຼັງໄດ້ຮັບເອກະສານຄຳຮ້ອງຄົບຖ້ວນ ຕາມມາດຕາ 18 ຂອງຂໍ້ຕົກລົງສະບັບນີ້, ພາຍໃນ ສິບຫ້າວັນລັດຖະການ, ໜ່ວຍງານຂຶ້ນທະບຽນວິຊາການຢາປາບສັດຕູພືດ ຕ້ອງກວດກາຄືນ ຄວາມຖືກຕ້ອງຂອງຊຸດເອກະສານເຕັກນິກ ແລະ ຂໍ້ມູນທີ່ຕ້ອງການທັງໝົດ ເພື່ອຄົ້ນຄວ້າ ແລະ ອອກໃບທະບຽນວິຊາການຢາປາບສັດຕູພືດຊໍ້າກັນ ໂດຍນຳໃຊ້ເລກທີ ແລະ ລະຫັດຄືກັນກັບໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ທີ່ໄດ້ກຳນົດສຳລັບຜູ້ຖືສະບັບເດີມ ພ້ອມທັງ ບັນທຶກລາຍລະອຽດຂອງການຂຶ້ນທະບຽນ ເຂົ້າໃສ່ບັນຊີຢາປາບສັດຕູພືດ ຕາມທີ່ກຳນົດໄວ້ ໃນມາດຕາ 14 ຂອງດຳລັດ ແລະ ແຈ້ງໃຫ້ພາກສ່ວນກ່ຽວຂ້ອງຮັບຊາບ.

ສຳລັບ ເນື້ອໃນຂອງໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊໍ້າກັນ ແມ່ນ ຄືກັນກັບເນື້ອໃນຂອງ ໃບຂຶ້ນທະບຽນວິຊາການຖາວອນ ຕາມທີ່ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ແລະ ໃຫ້ໃສ່ ເລກທີສະເພາະ ພ້ອມທັງໃສ່ລະຫັດຫຍໍ້ "SP/ກປຝ".

## ໝວດທີ 5
## ການດັດແກ້, ການຕໍ່ ແລະ ການຂຶ້ນທະບຽນວິຊາການຢາປາບສັດຕູພືດໃໝ່

### ມາດຕາ 20 ການດັດແກ້ການຂຶ້ນທະບຽນວິຊາການຢາປາບສັດຕູພືດ

ຜູ້ທີ່ໄດ້ຮັບໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ທີ່ມີຈຸດປະສົງ ປ່ຽນແປງ ຊື່ການຄ້າ, ເນື້ອໃນສະຫຼາກ, ແຜ່ນພັບ, ການຫຸ້ມຫໍ່ ຫຼື ພາຊະນະບັນຈຸ ຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນແລ້ວ ຕ້ອງ ແຈ້ງ ການປ່ຽນແປງດັ່ງກ່າວ ເປັນລາຍລັກອັກສອນ ຕໍ່ ກົມປູກຝັງ ພ້ອມທັງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມທີ່ກົມປູກຝັງກຳນົດ;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສຳເນົາ ໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;
4. ສຳເນົາ ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ;
5. ແບບຢ່າງ ຂອງສະຫຼາກ, ແຜ່ນພັບ, ການຫຸ້ມຫໍ່ ແລະ ຮູບຖ່າຍຂອງພາຊະນະບັນຈຸ ທີ່ ປ່ຽນແປງ.

ພາຍຫຼັງໄດ້ຮັບເອກະສານ ຂໍດັດແກ້ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ ແລ້ວ, ກົມປູກຝັງ ຕ້ອງພິຈາລະນາ ຕາມຂັ້ນຕອນຂອງການຂຶ້ນທະບຽນວິຊາການຢາປາບສັດຕູພືດ ຕາມແຕ່ລະກໍລະນີ ແລະ ອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຄືນໃໝ່ ໂດຍນຳໃຊ້ເລກທີຂຶ້ນທະບຽນເດີມ.

ກົມປູກຝັງ ສາມາດຮຽກເອົາ ເອກະສານ ຫຼື ຂໍ້ມູນເພີ່ມເຕີມ ເພື່ອປະກອບເຂົ້າໃນການພິຈາລະນາຄຳ ຮ້ອງ ພ້ອມທັງປະຕິບັດ ດັ່ງນີ້:

1. ອະນຸຍາດ ໃຫ້ ປ່ຽນແປງ ແລະ ເຮັດການປ່ຽນແປງ ທີ່ສອດຄ່ອງ ກັບການຂຶ້ນທະບຽນວິຊາ ການຢາປາບສັດຕູພືດ. ໃນກໍລະນີ ສະເໜີ ສະຫຼາກ, ແຜ່ນພັບ ຫຼື ການຫຸ້ມຫໍ່ໃໝ່ ຂອງຢາປາບ ສັດຕູພືດທີ່ຂຶ້ນທະບຽນແລ້ວ ບໍ່ໄດ້ລະເມີດ ດຳລັດ ຫຼື ຂອງຂໍ້ຕົກລົງສະບັບນີ້ ແລະ ອອກໃບ ຂຶ້ນທະບຽນວິຊາການຢາປາບສັດຕູພືດຄືນໃໝ່ ໂດຍ ນຳໃຊ້ເລກທີຂຶ້ນທະບຽນເດີມ.
2. ປະຕິເສດ ການປ່ຽນແປງທີ່ສະເໜີ ແລະ ແຈ້ງຕອບຜູ້ຂຶ້ນທະບຽນ ເປັນລາຍລັກອັກສອນ.

ໃນກໍລະນີ ຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນວິຊາການຖາວອນແລ້ວ ຜູ້ຂຶ້ນທະບຽນເດີມ ຕ້ອງການ ປ່ຽນແປງ ປະເພດສູດປະສົມ, ຄວາມເຂັ້ມຂຸ້ນຂອງສານອອກລິດ ຫຼື ການນຳໃຊ້ຢາປາບສັດຕູພືດຕ້ອງຍື່ນ ຄຳຮ້ອງ ແລະ ຊຸດເອກະສານເຕັກນິກ ຕາມທີ່ກຳນົດໄວ້ ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 21 ການຕໍ່ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ

ຜູ້ທີ່ມີຈຸດປະສົງ ຕໍ່ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ຕ້ອງຍື່ນຄຳຮ້ອງ ແລະ ເອກະ ສານ ທີ່ກ່ຽວຂ້ອງ ຕໍ່ ກົມປູກຝັງ ກ່ອນວັນໝົດອາຍຸ ຫົກສິບ ວັນ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມກຳນົດໄວ້ ໃນເອກະສານຊ້ອນທ້າຍ 1;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສຳເນົາ ໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;
4. ສຳເນົາ ໃບທະບຽນຢາປາບສັດຕູພືດ ຢູ່ປະເທດຕົ້ນກຳເນີດ;

5. ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ຕົ້ນສະບັບ;
6. ບົດລາຍງານການນໍາເຂົ້າ ຫຼື ຈໍາໜ່າຍໃນ ສາມ ປີຜ່ານມາ ແລະ ແຜນຄວາມຕ້ອງການໃນຕໍ່ໜ້າ ໂດຍການຢັ້ງຢືນ ຈາກ ອົງການຄຸ້ມຄອງຢາປາບສັດຕູພືດ ທີ່ກ່ຽວຂ້ອງ;
7. ສໍາເນົາບັດປະຈໍາຕົວ ຫຼື ໜັງສືເດີນທາງ ກໍລະນີເປັນຄົນຕ່າງປະເທດ.

**ມາດຕາ 22 ການຍົກເວັ້ນການຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ນອກຈາກ ຢາປາບສັດຕູພືດ ທີ່ນໍາເຂົ້າຊົ່ວຄາວ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 16 ຂອງດໍາລັດ ຊຶ່ງໄດ້ຮັບການຍົກເວັ້ນການຂຶ້ນທະບຽນວິຊາການຢາປາບສັດຕູພືດ ແລ້ວ, ຍັງລວມເຖິງຢາປາບສັດຕູພືດ ທີ່ອະນຸຍາດນໍາເຂົ້າ ໂດຍກົມປູກຝັງ ເພື່ອເປົ້າໝາຍໃດໜຶ່ງ ດັ່ງນີ້:

1. ມີເຫດການລະບາດ ຫຼື ໃກ້ຈະເກີດມີການລະບາດ ຂອງສັດຕູພືດ ທີ່ໄດ້ປະກາດເຂດສັດຕູພືດລະບາດ ຕາມກົດໝາຍ ວ່າດ້ວຍການປ້ອງກັນພືດ ແລະ ການກັກກັນພືດ ໂດຍບໍ່ມີ ຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນມາກ່ອນ;
2. ສໍາລັບການສຶກສາຄົ້ນຄ້ວາ ແລະ ການທົດສອບ;
3. ການນໍາເຂົ້າສານເຄມີສ່ວນປະກອບ ທີ່ນໍາໃຊ້ໃນການປະສົມຢາປາບສັດຕູພືດ.

ການນໍາເຂົ້າ ແລະ ນໍາໃຊ້ ຢາປາບສັດຕູພືດທີ່ຍົກເວັ້ນການຂຶ້ນທະບຽນ ຕາມມາດຕານີ້ ຕ້ອງໄດ້ຮັບອະນຸຍາດຈາກ ກົມປູກຝັງ ໂດຍຈໍາກັດປະລິມານຂອງຢາປາບສັດຕູພືດ ແລະ ກໍານົດເງື່ອນໄຂ ຂອງການປະຕິບັດສະເພາະ ຕາມແຕ່ລະກໍລະນີ.

ຢາປາບສັດຕູພືດທີ່ຍົກເວັ້ນການຂຶ້ນທະບຽນວິຊາການ ຕ້ອງອະນຸຍາດໃຫ້ນໍາເຂົ້າ ແລະ ນໍາໃຊ້ ບໍ່ເກີນສອງ ປີ. ໃນໄລຍະເວລາຂອງການນໍາໃຊ້ ກົມປູກຝັງ ຕ້ອງທົບທວນຄືນໃນແຕ່ລະໄລຍະ ກ່ຽວກັບ ຜົນກະທົບຕໍ່ສຸຂະພາບຂອງ ຄົນ, ສິ່ງແວດລ້ອມ ແລະ ສັດຕູພືດເປົ້າໝາຍ. ກໍລະນີ ຜົນຂອງການທົບທວນຄືນໄດ້ສະແດງໃຫ້ເຫັນວ່າ ມີຄວາມສ່ຽງຕໍ່ສຸຂະພາບຂອງ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ, ກົມປູກຝັງຕ້ອງສັ່ງໂຈະທັນທີ ແລະ ຊອກຫາທາງເລືອກອື່ນປ່ຽນແທນ.

**ມາດຕາ 23 ການໂຈະ ແລະ ການຍົກເລີກ ການຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ກົມປູກຝັງ ສາມາດໂຈະ ການຂຶ້ນທະບຽນວິຊາການຢາປາບສັດຕູພືດ ໃນກໍລະນີ ໃດໜຶ່ງ ດັ່ງນີ້:

1. ມີຂໍ້ມູນໃໝ່ ກ່ຽວກັບ ຢາປາບສັດຕູພືດ ທີ່ມີຄວາມສ່ຽງເປັນອັນຕະລາຍ ຕໍ່ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
2. ຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນ ນັ້ນ, ບໍ່ມີປະສິດທິພາບ ຫຼື ຄຸນນະພາບ ຕາມການຂຶ້ນທະບຽນ;
3. ຜູ້ໄດ້ຮັບອະນຸຍາດຂຶ້ນທະບຽນ ລະເມີດດໍາລັດ, ຂໍ້ຕົກລົງສະບັບນີ້ ຫຼື ບໍ່ປະຕິບັດຕາມເງື່ອນໄຂການຂຶ້ນທະບຽນ.

ພາຍຫຼັງໂຈະການຂຶ້ນທະບຽນ ກົມປູກຝັງ ຕ້ອງປະຊຸມຄະນະກໍາມະການພິຈາລະນາການຂຶ້ນທະບຽນວິຊາການຢາປາບສັດຕູພືດ ເພື່ອທົບທວນຄືນ ສະພາບຂອງການຂຶ້ນທະບຽນວິຊາການຢາປາບສັດຕູພືດ ພ້ອມທັງ ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ປະຕິບັດຕາມຂໍ້ກໍານົດ ຫຼື ເງື່ອນໄຂໃດໜຶ່ງທີ່ເໝາະສົມ ບົນພື້ນຖານຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ກົມປູກຝັງ ເປັນຜູ້ຍົກເລີກການຂຶ້ນທະບຽນວິຊາການຢາປາບສັດຕູພືດ ພ້ອມທັງ ລຶບຊື່ອອກຈາກບັນຊີຢາປາບສັດຕູພືດ ໂດຍແຈ້ງການເປັນລາຍລັກອັກສອນ ໃຫ້ຜູ້ຂຶ້ນທະບຽນວິຊາການຢາປາບສັດຕູພືດຊາບ ກ່ອນ ຊາວ ວັນລັດຖະການ ໃນກໍລະນີ ດັ່ງນີ້:

1. ມີຫຼັກຖານ ກ່ຽວກັບ ຄວາມອັນຕະລາຍຂອງຢາປາບສັດຕູພືດຕໍ່ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ໃນກໍລະນີ ປະສິດທິພາບ ຫຼື ຄຸນນະພາບ ຂອງຢາປາບສັດຕູພືດທີ່ເຮັດໃຫ້ເຂົ້າໃຈຜິດໃນເວລາຂຶ້ນທະບຽນ;

2. ມີການສະເໜີຂອງ ຄະນະສະເພາະກິດ ເພື່ອກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບ ຢາປາບສັດຕູພືດ;
3. ຜູ້ຂຶ້ນທະບຽນ ລະເມີດຄຳລັດ ແລະ ລະບຽບການຢາປາບສັດຕູພືດ ເປັນຄັ້ງທີສອງ ຫຼື ເປັນອາຈິນ.

ຄະນະກຳມະການພິຈາລະນາການຂຶ້ນທະບຽນວິຊາການຢາປາບສັດຕູພືດ ສາມາດສະເໜີ ກົມປູກຝັງ ກ່ຽວກັບ ກໍລະນີຂອງການ ໂຈະ ຫຼື ຖອນ ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ ທີ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້. ໃນກໍລະນີດັ່ງກ່າວ, ກົມປູກຝັງ ຕ້ອງແຈ້ງເຫດຜົນ ເປັນລາຍລັກອັກສອນ ຕໍ່ຜູ້ຂຶ້ນທະບຽນ ກ່ຽວກັບ ການໂຈະ ຫຼື ຖອນ.

ສຳລັບຜະລິດຕະພັນຢາປາບສັດຕູພືດ ທີ່ຖືກໂຈະ ຫຼື ຍົກເລີກ ການຂຶ້ນທະບຽນນັ້ນ ແມ່ນບໍ່ອະນຸຍາດ ໃຫ້ນຳເຂົ້າ, ຜະລິດ, ຈຳໜ່າຍ ຫຼື ນຳໃຊ້ ຢ່າງເດັດຂາດ.

## ມາດຕາ 24 ການເກັບຄືນ ຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນວິຊາການແລ້ວ

ກົມປູກຝັງ ສາມາດ ເກັບຄືນຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນວິຊາການຖາວອນ ຫຼື ຊົ່ວຄາວ ໃນກໍລະນີ ໃດໜຶ່ງ ດັ່ງນີ້:

1. ມີຫຼັກຖານທາງດ້ານວິທະຍາສາດ ທີ່ສະແດງໃຫ້ຮູ້ວ່າ ຢາປາບສັດຕູພືດນັ້ນ ບໍ່ໄດ້ມາດຕະຖານດ້ານຄວາມປອດໄພ;
2. ມີຄວາມສ່ຽງທີ່ບໍ່ສາມາດຮັບໄດ້;
3. ໄດ້ຮັບການແຈ້ງຂໍ້ມູນຈາກແຫຼ່ງທີ່ໜ້າເຊື່ອຖື ກ່ຽວກັບ ການຕົກຄ້າງຍາວນານຂອງຢາປາບສັດຕູພືດ.

ການເກັບຄືນຢາປາບສັດຕູພືດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຕ້ອງລາຍງານໃຫ້ ກົມປູກຝັງ ພາຍຫຼັງພົບກໍລະນີໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້;
2. ໃຫ້ພາກສ່ວນທີ່ກ່ຽວຂ້ອງມີຄຳເຫັນ ພາຍຫຼັງພິມເຜີຍແຜ່ໃນເວັບໄຊ ຂອງ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຢ່າງໜ້ອຍ ເກົ້າສິບ ວັນ;
3. ພາຍຫຼັງໄດ້ຮັບການປະກອບຄຳເຫັນ ຈາກສິ່ງຄົມໃນເວລາທີ່ໄດ້ກຳນົດ ໃຫ້ພິມເຜີຍແຜ່ ການຕັດສິນໃຈຂັ້ນສຸດທ້າຍ ແລະ ໃນກໍລະນີ ຕົກລົງໃຫ້ເກັບຄືນຢາປາບສັດຕູພືດ ຕ້ອງກຳນົດເວລາໃນການດຳເນີນມາດຕະການດັ່ງກ່າວ.

## ມາດຕາ 25 ການແຈ້ງເຕືອນລ່ວງໜ້າ

ກົມປູກຝັງ ເປັນຜູ້ແຈ້ງໄປຍັງ ກອງເລຂາສົນທິສັນຍາຣົດເຕີດຳ ກ່ຽວກັບ ຢາປາບສັດຕູພືດທີ່ຈັດຢູ່ໃນປະເພດຈຳກັດນຳໃຊ້ ຫຼື ຈຳກັດນຳໃຊ້ຢ່າງເຂັ້ມງວດ ລວມທັງ ສານເຄມີ ທີ່ກຳນົດໄວ້ໃນເອກະສານຄັດຕິດທີ III ຂອງສົນທິສັນຍາຣົດເຕີດຳ, ສານເຄມີທີ່ຫ້າມຜະລິດ ຢູ່ໃນປະເທດ ແລະ ສານເຄມີທີ່ຫ້າມໃຊ້ໃນ ສປປ ລາວ.

## ມາດຕາ 26 ສິດ ແລະ ພັນທະ ຂອງຜູ້ຂຶ້ນທະບຽນວິຊາການຢາປາບສັດຕູພືດ

ຜູ້ຂຶ້ນທະບຽນວິຊາການຢາປາບສັດຕູພືດ ມີ ສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

1. ຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ຢາປາບສັດຕູພືດ ໃຫ້ຖືກຕ້ອງຕາມການອະນຸຍາດ, ຫຼັກການ ແລະ ມາດຕະຖານເຕັກນິກ ລວມທັງກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
2. ລາຍງານແຜນການຜະລິດ, ນຳເຂົ້າ, ຈຳໜ່າຍ ຫຼື ນຳໃຊ້ໃນແຕ່ລະປີ ໃຫ້ແກ່ ກົມປູກຝັງ ຢ່າງເປັນປົກກະຕິ;
3. ເກັບຄືນ, ກຳຈັດ ຫຼື ສົ່ງກັບຄືນຢາປາບສັດຕູພືດ ທີ່ໝົດອາຍຸນຳໃຊ້ ແລະ ເສຍຄຸນລັກສະນະ;

4. ສະໜອງຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງກັບ ຢາປາບສັດຕູພືດ ທີ່ຕ້ອງການຂຶ້ນທະບຽນ;
5. ອຳນວຍຄວາມສະດວກ ໃນການຕິດຕາມກວດກາຢາປາບສັດຕູພືດ ຫຼັງການຂຶ້ນທະບຽນວິຊາການຢາປາບສັດຕູພືດ;
6. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການທົດສອບ, ການວິໄຈ, ການປະເມີນ ແລະ ການຈັດການຄວາມສ່ຽງຢາປາບສັດຕູພືດ

### ມາດຕາ 27 ການທົດສອບປະສິດທິພາບຢາປາບສັດຕູພືດ

ກົມປູກຝັງ ເປັນຜູ້ທົດສອບປະສິດທິພາບຢາປາບສັດຕູພືດ ໂດຍການພິຈາລະນາເຖິງຈຳນວນການທົດສອບທີ່ຈະດຳເນີນ ສຳລັບສັດຕູພືດທີ່ສຳຄັນຂອງພືດຫຼັກ ເປັນຕົ້ນ ຈຳນວນຊ້ຳ ແລະ ຂະໜາດຂອງແປງທີ່ຈະເຮັດການທົດສອບ, ອັດຕານຳໃຊ້ຢາປາບສັດຕູພືດ, ປະເພດ, ເວລາ ແລະ ຄວາມຖີ່ຂອງການປະເມີນ ລວມທັງ ຂໍ້ແນະນຳ ກ່ຽວກັບ ການປະເມີນຄວາມເປັນພິດ ຕໍ່ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ບົນພື້ນຖານການທົດສອບທີ່ດີ, ດຳເນີນການທົດສອບໃນວິທີການ ແບບວິທະຍາສາດ ແລະ ປະຕິບັດຕາມມາດຕະຖານພາກພື້ນ ແລະ ສາກົນ.

### ມາດຕາ 28 ການວິໄຈການຕົກຄ້າງ ຂອງຢາປາບສັດຕູພືດ

ກົມປູກຝັງ ເປັນຜູ້ວິໄຈສານພິດຕົກຄ້າງຂອງຢາປາບສັດຕູພືດ ໂດຍການຮ່ວມມືກັບ ຂະແໜງການສາທາລະນະສຸກ ເພື່ອສ້າງ ວິທີການ, ມາດຕະຖານ ຂອງການວິໄຈ ແລະ ແຜນການທົດສອບ ການຕົກຄ້າງຂອງຢາປາບສັດຕູພືດ ໃຫ້ສອດຄ່ອງຕາມມາດຕະຖານອາຫານ ທີ່ຮັບຮອງໂດຍກະຊວງສາທາລະນະສຸກ, ສັນຍາສອງຝ່າຍ ຫຼື ມາດຕະຖານລະດັບການຕົກຄ້າງສູງສຸດ ຂອງຢາປາບສັດຕູພືດຂອງພາກພື້ນ.

ການວິໄຈຄຸນນະພາບ ແລະ ສານພິດຕົກຄ້າງຂອງຢາປາບສັດຕູພືດ ຕ້ອງດຳເນີນຢູ່ຫ້ອງທົດລອງທີ່ໄດ້ມາດຕະຖານສາກົນ ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ຮັບຮອງ ຕາມການສະເໜີຂອງ ກົມປູກຝັງ.

### ມາດຕາ 29 ການປະເມີນ ແລະ ການຈັດການຄວາມສ່ຽງຢາປາບສັດຕູພືດ

ກົມປູກຝັງ ເປັນຜູ້ດຳເນີນການປະເມີນ ແລະ ຈັດການຄວາມສ່ຽງຢາປາບສັດຕູພືດ ດັ່ງນີ້:

1. ປະເມີນຢາປາບສັດຕູພືດ ທີ່ຈັດຢູ່ໃນລະດັບຄວາມເປັນພິດທີ III ຫຼື ສູງກວ່າ ພາຍໃຕ້ການປະເມີນລັກສະນະຂອງຄວາມສ່ຽງທີ່ເປັນໄປໄດ້ ແລະ ຄວາມເປັນໄປໄດ້ຂອງຄວາມອັນຕະລາຍຕໍ່ສຸຂະພາບຂອງ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ທີ່ສາມາດເກີດຈາກຄຸນສົມບັດທີ່ເປັນອັນຕະລາຍຂອງຢາປາບສັດຕູພືດ;
2. ສ້າງ ແລະ ພັດທະນາ ນະໂຍບາຍ ເພື່ອການຈັດການ ແລະ ຫຼຸດຜ່ອນຄວາມສ່ຽງຢາປາບສັດຕູພືດ ລວມທັງການກຳນົດເງື່ອນໄຂ ຫຼື ຂອບເຂດການນຳໃຊ້;
3. ສົມທຽບຄວາມສ່ຽງຢາປາບສັດຕູພືດ ທີ່ສະແດງໃຫ້ເຫັນຄວາມສ່ຽງທີ່ກ່ຽວຂ້ອງຕ່ຳກວ່າ;
4. ພິຈາລະນາ ປະຕິເສດ ການຂຶ້ນທະບຽນວິຊາການຢາປາບສັດຕູພືດ ສຳລັບ ຜະລິດຕະພັນຢາປາບສັດຕູພືດທີ່ເປັນພິດສູງ ຫຼື ຕົກຄ້າງຍາວນານໃນສິ່ງແວດລ້ອມ ໃນກໍລະນີ ມີທາງເລືອກທີ່ປອດໄພກວ່າຜະລິດຕະພັນຢາປາບສັດຕູພືດນັ້ນ.

## ໝວດທີ 7
## ການຈຳແນກ ແລະ ການຈັດລະດັບປະເພດຢາປາບສັດຕູພືດ

### ມາດຕາ 30 ການຈຳແນກປະເພດນຳໃຊ້ຢາປາບສັດຕູພືດ

ໜ່ວຍງານຂຶ້ນທະບຽນວິຊາການຢາປາບສັດຕູພືດ ເປັນຜູ້ຄົ້ນຄ້ວາເປົ້າໝາຍ ແລະ ຈຳແນກປະເພດການນຳໃຊ້ຢາປາບສັດຕູພືດ ເພື່ອສະເໜີ ກົມປູກຝັງ ພິຈາລະນາ ຊຶ່ງມີ ສາມ ປະເພດ ດັ່ງນີ້:

1. ການນຳໃຊ້ທົ່ວໄປ;
2. ການຈຳກັດນຳໃຊ້ ແມ່ນ ຢາປາບສັດຕູພືດອັນຕະລາຍ ແລະ ນຳໃຊ້ຕາມເງື່ອນໄຂສະເພາະ ທີ່ກຳນົດໃນ ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ ໂດຍມີຄຳສັບ "ຈຳກັດການນຳໃຊ້" ແລະ ເຄື່ອງໝາຍຕິດໄປນຳ;
3. ການຈຳກັດນຳໃຊ້ຢ່າງເຂັ້ມງວດ ແມ່ນ ຢາປາບສັດຕູພືດທີ່ເປັນອັນຕະລາຍ ແລະ ນຳໃຊ້ຕາມເງື່ອນໄຂສະເພາະທີ່ກຳນົດໂດຍ ກົມປູກຝັງ ພ້ອມທັງມີຄຳສັບ "ກຳຈັດຢ່າງເຂັ້ມງວດ" ຫຼື "ຫ້າມນຳໃຊ້".

ກົມປູກຝັງ ຕ້ອງຈັດພິມບັນຊີຢາປາບສັດຕູພືດ ຫຼື ສູດປະສົມ ຢາປາບສັດຕູພືດທີ່ຈຳກັດນຳໃຊ້ ແລະ ຈຳກັດນຳໃຊ້ຢ່າງເຂັ້ມງວດ ໃຫ້ບັນດາທຸລະກິດ ຫຼື ບຸກຄົນ ສາມາດເຂົ້າເຖິງບັນຊີຢາປາບສັດຕູພືດດັ່ງກ່າວ.

### ມາດຕາ 31 ການຈັດລະດັບຄວາມອັນຕະລາຍຂອງຢາປາບສັດຕູພືດ

ການຈັດລະດັບຄວາມອັນຕະລາຍຂອງຢາປາບສັດຕູພືດ ແມ່ນ ໃຫ້ອີງຕາມລະບົບການຈັດລະດັບຄວາມອັນຕະລາຍຢາປາບສັດຕູພືດຂອງອົງການອະນາໄມໂລກ ແລະ ມາດຕາ 33 ຂອງຂໍ້ຕົກລົງສະບັບນີ້ ໂດຍມີ ລະຫັດຂອງແຖບສີ ແລະ ຮູບພາບຄວາມປອດໄພທີ່ກ່ຽວຂ້ອງກັບຄວາມເປັນພິດຂອງຜະລິດຕະພັນພິມໄວ້ໃນສະຫຼາກເບື້ອງລຸ່ມ ລວມທັງ ແຖບສີ ທີ່ສະແດງໃຫ້ເຫັນເຖິງລະດັບຄວາມອັນຕະລາຍ ຂອງຢາປາບສັດຕູພືດ ດັ່ງນີ້:

1. ຢາປາບສັດຕູພືດ ປະເພດລະດັບອັນຕະລາຍຮ້າຍແຮງສູງ Ia ແລະ ປະເພດລະດັບອັນຕະລາຍຮ້າຍແຮງ Ib ຕ້ອງມີ:
   - ແຖບສີ: ໃນລະບົບມາດຕະຖານຂອງສີ ແມ່ນສີແດງ ລະຫັດເລກທີ 199C ສີແດງ
   - ປະໂຫຍກເຕືອນໄພ: "ພິດຮ້າຍແຮງຫຼາຍ"
   - ຮູບພາບ: 
2. ຢາປາບສັດຕູພືດ ປະເພດອັນຕະລາຍປານກາງ ຫຼື ລະດັບ II ຕ້ອງມີ:
   - ແຖບສີ: ໃນລະບົບມາດຕະຖານຂອງສີ ແມ່ນສີເຫຼືອງ ສີເຫຼືອງ
   - ປະໂຫຍກເຕືອນໄພ: "ພິດຮ້າຍແຮງ"
   - ຮູບພາບ: 
3. ຢາປາບສັດຕູພືດ ປະເພດອັນຕະລາຍໜ້ອຍ ຫຼື ລະດັບ III ຕ້ອງມີ:
   - ແຖບສີ: ໃນລະບົບມາດຕະຖານຂອງສີ ແມ່ນສີຟ້າ ລະຫັດ 293C ສີຟ້າ
   - ປະໂຫຍກເຕືອນໄພ: "ອັນຕະລາຍ"
   - ຮູບພາບ: 